# ແບບຟອມ

## ແບບຟອມກ່ຽວກັບການສ້າງຕັ້ງ ແລະ ການເຄື່ອນໄຫວຂອງສະມາຄົມ

1. ໜັງສືສະເໜີຂໍຮັບຮອງເອົາການແຕ່ງຕັ້ງຄະນະຂົນຂວາຍສ້າງຕັ້ງສະມາຄົມ;
2. ໜັງສືສະເໜີຂໍເປີດກອງປະຊຸມສ້າງຕັ້ງສະມາຄົມ;
3. ບົດສະເໜີເຫດຜົນ ແລະ ຄວາມຈຳເປັນໃນການສ້າງຕັ້ງສະມາຄົມ;
4. ຮ່າງກົດລະບຽບຂອງສະມາຄົມ;
5. ແຜນການເຄື່ອນໄຫວ ຫຼື ແຜນການດຳເນີນງານຂອງສະມາຄົມໃນຕໍ່ໜ້າ;
6. ໜັງສືສະເໜີຂໍສະໝັກເປັນສະມາຊິກສະມາຄົມ;
7. ບັນຊີລາຍຊື່ຜູ້ສະໝັກເຂົ້າເປັນສະມາຊິກສະມາຄົມ;
8. ບົດບັນທຶກຜົນກອງປະຊຸມສ້າງຕັ້ງສະມາຄົມ;
9. ມະຕິກອງປະຊຸມສ້າງຕັ້ງສະມາຄົມ;
10. ໜັງສືສະເໜີຂໍສ້າງຕັ້ງ, ຮັບຮອງກົດລະບຽບ ແລະ ຄະນະບໍລິຫານສະມາຄົມ;
11. ໜັງສືສະເໜີຂໍຈົດທະບຽນ;
12. ໜັງສືສະເໜີຂໍຕໍ່ທະບຽນ;
13. ໜັງສືສະເໜີຂໍຈັດກອງປະຊຸມໃຫຍ່ສາມັນ ຫຼື ວິສາມັນ;
14. ບົດລາຍງານການເຄື່ອນໄຫວປະຈຳປີຂອງສະມາຄົມ.

**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**
**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

## ໜັງສືສະເໜີ

**ຮຽນ:** ທ່ານ ລັດຖະມົນຕີ ຫຼື ຫົວໜ້າອົງການ.................................................... ທີ່ນັບຖື.

**ເລື່ອງ:** ສະເໜີຂໍຮັບຮອງເອົາການແຕ່ງຕັ້ງຄະນະຂົນຂວາຍສ້າງຕັ້ງສະມາຄົມ.............................

– ອີງຕາມ ດຳລັດວ່າດ້ວຍ ສະມາຄົມ ສະບັບເລກທີ 238/ລບ, ລົງວັນທີ 11 ສິງຫາ 2017;
– ອີງຕາມ ຄຳແນະນຳການຈັດຕັ້ງປະຕິບັດ ດຳລັດວ່າດ້ວຍ ສະມາຄົມ ສະບັບເລກທີ 05/ພນ, ລົງວັນທີ 11 ຕຸລາ 2017.

ຂ້າພະເຈົ້າທ້າວ ຫຼື ນາງ: ............................................... ນາມສະກຸນ:.................................. (ວັນ, ເດືອນ, ປີເກີດ)......................................, ອາຊີບປະຈຸບັນ:.......................... ບ່ອນປະຈຳການ :.................................. (ຖ້າມີ) ເບີໂທ:............................ ເບີແຟັກ:.......................... ທີ່ຢູ່ປະຈຸບັນ ເຮືອນເລກທີ:................. (ຫ້ອງ:..... ຊັ້ນ:.......)[1] ໜ່ວຍ:.......... ຮ່ອມ:............ ຖະໜົນ:...................... ບ້ານ:............................ ເມືອງ:...................................... ແຂວງ:........................... ເບີໂທສ່ວນຕົວ:.................. ແຟັກ:...................................................... ຕູ້ໄປສະນີ:..................................... ອີເມວ:............................................................

ໃນນາມຜູ້ມີຄວາມຄິດລິເລີ່ມໃນການສ້າງຕັ້ງ ສະມາຄົມ............................................ ຂໍຖືເປັນກຽດຮຽນສະເໜີມາຍັງທ່ານ ເພື່ອຮັບຮອງເອົາການແຕ່ງຕັ້ງຄະນະຂົນຂວາຍສ້າງຕັ້ງສະມາຄົມ ຊຶ່ງມີລາຍລະອຽດດັ່ງລຸ່ມນີ້:

**ຄະນະຂົນຂວາຍມີຈຳນວນ:................ທ່ານ ຄື:**

1. ຊື່ ແລະ ນາມສະກຸນ (ຜູ້ທີ 1): ........................................................ ອາຍຸ:............ປີ, ອາຊີບປະຈຸບັນ:......................................... ບ່ອນປະຈຳການ:.................................... ເບີໂທ:.............................................. ແຟັກ:....................................... ທີ່ຢູ່ປະຈຸບັນ ເຮືອນເລກທີ:................ (ຫ້ອງ:..... ຊັ້ນ:.......) ໜ່ວຍ:............ ຮ່ອມ:.......................... ຖະໜົນ:.................................. ບ້ານ:.................................. ເມືອງ:................ ແຂວງ:..................................... ເບີໂທສ່ວນຕົວ:................................................... ແຟັກ:............................ ຕູ້ໄປສະນີ:........................ ອີເມວ:...............................
2. ຊື່ ແລະ ນາມສະກຸນ (ຜູ້ທີ 2): ..................................................ອາຍຸ:......................ປີ, ອາຊີບປະຈຸບັນ:......................................... ບ່ອນປະຈຳການ:.................................... ເບີໂທ:.............................................. ແຟັກ:....................................... ທີ່ຢູ່ປະຈຸບັນ ເຮືອນເລກທີ:..............(ຫ້ອງ:..... ຊັ້ນ:.......) ໜ່ວຍ:........ ຮ່ອມ:............ ຖະໜົນ:............ ບ້ານ:.................. ເມືອງ:........... ແຂວງ:.......... ເບີໂທສ່ວນຕົວ:.............ແຟັກ:........... ຕູ້ໄປສະນີ:................ ອີເມວ:................................

[1] ສຳລັບສະມາຄົມທີ່ຢູ່ຕຶກອາຄານລວມ

3. ຊື່ ແລະ ນາມສະກຸນ (ຜູ້ທີ 3): ..................................................... ອາຍຸ:................ປີ, ອາຊີບປະຈຸບັນ:......................................... ບ່ອນປະຈໍາການ:.................................... ເບີໂທ:.............................................. ແຟັກ:...................................... ທີ່ຢູ່ປະຈຸບັນ ເຮືອນເລກທີ:...................(ຫ້ອງ:..... ຊັ້ນ:.......) ໜ່ວຍ:............ ຮ່ອມ:......................... ຖະໜົນ:.................................... ບ້ານ:........... ເມືອງ:.......... ແຂວງ:............. ເບີໂທ ສ່ວນຕົວ:...........ແຟັກ:........................ ຕູ້ໄປສະນີ:............ ອີເມວ:.................

(ກໍລະນີຫຼາຍກວ່າ 03 ທ່ານ ໃຫ້ພິມຕໍ່ລົງມາ ຫຼື ເຮັດເປັນເອກະສານຊ້ອນທ້າຍ)

ຄະນະຂົນຂວາຍທີ່ຖືກແຕ່ງຕັ້ງນີ້ມີໜ້າທີ່ກະກຽມເອກະສານ ແລະ ເງື່ອນໄຂຕ່າງໆ ເພື່ອສະເໜີຂໍອະນຸມັດ ສ້າງຕັ້ງສະມາຄົມ. ສະມາຄົມມີຈຸດປະສົງ, ຂະແໜງການ, ຂອບເຂດ ແລະ ທີ່ຕັ້ງສໍານັກງານໃນການເຄື່ອນໄຫວ ດັ່ງນີ້:

**1) ຈຸດປະສົງຂອງສະມາຄົມ**[2]

1. ..........................................................................................................................
2. ..........................................................................................................................
3. ..........................................................................................................................

**2) ຂະແໜງການເຄື່ອນໄຫວ**[3]

1. ..........................................................................................................................
2. ..........................................................................................................................
3. ..........................................................................................................................

**3) ສະມາຄົມ**……......................…… **ແມ່ນອົງການຈັດຕັ້ງສັງຄົມທີ່ມີສະມາຊິກ ຊຶ່ງເຄື່ອນໄຫວໃນຂອບເຂດ .................................. (ທົ່ວປະເທດ, ແຂວງ/ນະຄອນຫຼວງ, ເມືອງ/ເທດສະບານ/ນະຄອນ/ບ້ານ).**

**4) ທີ່ຕັ້ງສໍານັກງານຂອງສະມາຄົມ**

ເຮືອນເລກທີ:.............. (ຫ້ອງ:..... ຊັ້ນ:.......) ໜ່ວຍ:........ ຮ່ອມ:............ ຖະໜົນ:................... ບ້ານ:......................... ເມືອງ:..................................... ແຂວງ:..................................... ເບີໂທ:...................... ແຟັກ:..................... ຕູ້ໄປສະນີ:............... ອີເມວ:..............................

ດັ່ງນັ້ນ, ຈຶ່ງຮຽນ ມາຍັງທ່ານເພື່ອພິຈາລະນາຕາມລະບຽບການດ້ວຍ.

ທີ່................................, ວັນທີ..... ເດືອນ.......ປີ......

**ຜູ້ສະເໜີ**

ເອກະສານຄັດຕິດ:

1. ຊີວະປະຫວັດ ຕາມແບບຟອມຂອງ ກະຊວງ ປ້ອງກັນຄວາມສະຫງົບ;
2. ໃບຢັ້ງຢືນທີ່ຢູ່;
3. ໃບແຈ້ງໂທດ;
4. ໃບທະບຽນວິສາຫະກິດ ຫຼື ໃບອະນຸຍາດດໍາເນີນທຸລະກິດ (ສໍາລັບສະມາຄົມເສດຖະກິດ);
5. ໃບຢັ້ງຢືນວິຊາສະເພາະ ຫຼື ໃບຢັ້ງຢືນປະສົບການເຮັດວຽກ ໃນດ້ານໃດໜຶ່ງທີ່ກ່ຽວຂ້ອງກັບຈຸດປະສົງການເຄື່ອນໄຫວຂອງສະມາຄົມ;
6. ສໍາເນົາບັດປະຈໍາຕົວ ຫຼື ສໍາມະໂນຄົວ;

[2] ລະບຸຈຸດປະສົງຕົ້ນຕໍ ທີ່ເປັນສາເຫດໃນການສ້າງຕັ້ງ ແລະ ເປັນບ່ອນອີງໃນການເຄື່ອນໄຫວສະມາຄົມ.

[3] ຂະແໜງການເຄື່ອນໄຫວ ແມ່ນຍົກໃຫ້ເຫັນແຈ້ງກ່ຽວກັບວຽກທີ່ຕົນຈະເຄື່ອນໄຫວກ່ຽວຂ້ອງກັບຂະແໜງການໃດແດ່. ຍົກຕົວຢ່າງ: ເຄື່ອນໄຫວດ້ານຂະແໜງກະສິກໍາ, ຂະແໜງສາທາລະນະສຸກ, ຂະແໜງອຸດສາຫະກໍາ ແລະ ການຄ້າ, ຂະແໜງສຶກສາ ແລະ ອື່ນໆ.

7. ໃບຢັ້ງຢືນທີ່ຕັ້ງສຳນັກງານ ທີ່ໄດ້ຮັບການຢັ້ງຢືນຈາກເຈົ້າຂອງສະຖານທີ່, ອົງການປົກຄອງບ້ານ ແລະ ແຜນທີ່ ຫຼື ແຜນວາດໂດຍສັງເຂບຂອງສຳນັກງານສະມາຄົມ.

**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**
**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

# ໜັງສືສະເໜີ

**ຮຽນ:** ທ່ານ ລັດຖະມົນຕີ ຫຼື ຫົວໜ້າອົງການ...................................... ທີ່ນັບຖື.

**ເລື່ອງ:** ສະເໜີຂໍອະນຸມັດເປີດກອງປະຊຸມສ້າງຕັ້ງສະມາຄົມ ................................

– ອີງຕາມ ດຳລັດວ່າດ້ວຍ ສະມາຄົມ ສະບັບເລກທີ 238/ລບ ລົງວັນທີ 11 ສິງຫາ 2017;

– ອີງຕາມ ຄຳແນະນຳຈັດຕັ້ງປະຕິບັດ ດຳລັດວ່າດ້ວຍ ສະມາຄົມ ສະບັບເລກທີ 05/ພນ, ລົງວັນທີ 11 ຕຸລາ 2017;

– ອີງຕາມ ຂໍ້ຕົກລົງ ວ່າດ້ວຍການຮັບຮອງຄະນະຂົນຂວາຍສ້າງຕັ້ງສະມາຄົມ.............. ສະບັບເລກທີ.., ລົງວັນທີ..................................

ຂ້າພະເຈົ້າທ້າວ ຫຼື ນາງ: .................................................. ນາມສະກຸນ:................................ ໃນນາມຕາງໜ້າຄະນະຂົນຂວາຍສ້າງຕັ້ງສະມາຄົມ ຂໍຖືເປັນກຽດຮຽນ ສະເໜີມາຍັງທ່ານ ເພື່ອຂໍເປີດກອງປະຊຸມສ້າງຕັ້ງສະມາຄົມ..........................................ຊຶ່ງຄາດຄະເນຈະຈັດຂຶ້ນຕາມວັນເວລາ ແລະ ສະຖານທີ່ ດັ່ງລຸ່ມນີ້:

– **ວັນທີ:** .......... ເດືອນ............ ປີ............
– **ເວລາ:** .................................
– **ສະຖານທີ່:** ...............................................

ດັ່ງນັ້ນ, ຈຶ່ງຮຽນສະເໜີມາຍັງທ່ານ ເພື່ອພິຈາລະນາຕາມລະບຽບການດ້ວຍ.

ທີ່..............................., ວັນທີ..... ເດືອນ.......ປີ......

**ຕາງໜ້າຄະນະຂົນຂວາຍ**

**ເອກະສານຄັດຕິດ:**

1. ວາລະກອງປະຊຸມ;
2. ບົດສະເໜີເຫດຜົນ ແລະ ຄວາມຈຳເປັນໃນການຂໍສ້າງຕັ້ງສະມາຄົມ;
3. ຮ່າງກົດລະບຽບຂອງສະມາຄົມ;
4. ແຜນການເຄື່ອນໄຫວ ຫຼື ແຜນດຳເນີນການຂອງສະມາຄົມ;
5. ບັນຊີລາຍຊື່ຂອງບຸກຄົນ ຫຼື ການຈັດຕັ້ງ ຫຼື ສະມາຄົມ ທີ່ໄດ້ລົງທະບຽນເຂົ້າຮ່ວມເປັນສະມາຊິກສະມາຄົມ (ຕາມແບບຟອມທີ 5) ພ້ອມດ້ວຍສຳເນົາ ບັດປະຈຳຕົວ ຫຼື ສຳມະໂນຄົວ (ສຳລັບສະມາຊິກທີ່ເປັນການຈັດຕັ້ງ ຫຼື ສະມາຄົມ ແມ່ນໃຫ້ສຳເນົາ ຂໍ້ຕົກລົງ ຫຼື ໃບອະນຸມັດສ້າງຕັ້ງ);
6. ໃບຢັ້ງຢືນທີ່ຕັ້ງສຳນັກງານຂອງສະມາຄົມ ທີ່ໄດ້ຮັບການຢັ້ງຢືນຈາກເຈົ້າຂອງສະຖານທີ່, ອົງການປົກຄອງບ້ານ ແລະ ແຜນທີ່ ຫຼື ແຜນວາດໂດຍສັງເຂບຂອງສຳນັກງານສະມາຄົມ (ກໍລະນີມີການປ່ຽນແປງ).

**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**
**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

# ບົດສະເໜີເຫດຜົນ ແລະ ຄວາມຈຳເປັນ ໃນການສ້າງຕັ້ງສະມາຄົມ

- ອີງຕາມ ດຳລັດວ່າດ້ວຍ ສະມາຄົມ ສະບັບເລກທີ 238/ລບ ລົງວັນທີ 11 ສິງຫາ 2017;
- ອີງຕາມ ຄຳແນະນຳຈັດຕັ້ງປະຕິບັດ ດຳລັດວ່າດ້ວຍ ສະມາຄົມ ສະບັບເລກທີ 05/ພນ, ລົງວັນທີ 11 ຕຸລາ 2017;
- ອີງຕາມ ຂໍ້ຕົກລົງ ວ່າດ້ວຍການຮັບຮອງຄະນະຂົນຂວາຍສ້າງຕັ້ງສະມາຄົມ...... ສະບັບເລກທີ......., ລົງວັນທີ.............

ຂ້າພະເຈົ້າທ້າວ ຫຼື ນາງ: ........................................... ນາມສະກຸນ:............................ ໃນນາມຕາງໜ້າຄະນະຂົນຂວາຍສ້າງຕັ້ງສະມາຄົມ ຂໍຖືເປັນກຽດຮຽນສະເໜີມາຍັງທ່ານ ກ່ຽວກັບເຫດຜົນ ແລະ ຄວາມຈຳເປັນໃນການສ້າງຕັ້ງສະມາຄົມ.......................................... ຊຶ່ງມີລະອຽດດັ່ງລຸ່ມນີ້:

## I. ເຫດຜົນ ແລະ ຄວາມຈຳເປັນ ໃນການສ້າງຕັ້ງສະມາຄົມ

### 1. ສະພາບການຕົວຈິງ ກ່ຽວກັບຂະແໜງການທີ່ສະມາຄົມຈະເຄື່ອນໄຫວ.[1]

- ❖ **ພາຍໃນປະເທດ**.........................................................................................

.........................................................................................................

.........................................................................................................

.........................................................................................................

- ❖ **ສາກົນ ແລະ ຕ່າງປະເທດ (ຖ້າມີ)** ....................................................................

.........................................................................................................

.........................................................................................................

.........................................................................................................

### 2. ຄາດຄະເນການປ່ຽນແປງ (ທັງດ້ານບວກ ແລະ ດ້ານລົບ) ໃນຕໍ່ໜ້າ ກ່ຽວກັບຂະແໜງການທີ່ສະມາຄົມຈະເຄື່ອນໄຫວ.[2]

.........................................................................................................

---

[1] ຍົກໃຫ້ເຫັນສະພາບການຄຸ້ມຄອງ, ການພັດທະນາ ຂອງຂົງເຂດ ຫຼື ຂະແໜງການທີ່ສະມາຄົມຈະເຄື່ອນໄຫວນັ້ນ ຢູ່ໃນປະເທດ ຫຼື ຢູ່ໃນທ້ອງຖິ່ນນັ້ນ ແລະ ຢູ່ໃນສາກົນ ແລະ ຕ່າງປະເທດ (ຖ້າມີ).

[2] ຄາດຄະເນການປ່ຽນແປງ (ທັງດ້ານບວກ ແລະ ດ້ານລົບ) ໃນຕໍ່ໜ້າ ຈະມີການຄຸ້ມຄອງ, ພັດທະນາຄືແນວໃດ? ຖ້າມີສະມາຄົມ ຈະມີຂໍ້ສະດວກ, ມີກຳລັງແຮງເພີ່ມຕື່ມ ໃນການຄຸ້ມຄອງ ຫຼື ພັດທະນາແນວໃດ? ຫຼື ຈະຊ່ວຍແບ່ງເບົາໃນການແກ້ໄຂຄວາມທຸກຍາກ, ປັບປຸງຊີວິດການເປັນຢູ່ ຂອງປະຊາຊົນ ແລະ ດ້ານອື່ນໆ ແນວໃດ?

........................................................................................................................................ ...

...........................................................................................................................................

**3. ສະຫຼຸບ ກ່ຽວກັບຄວາມຕ້ອງການໃນການສ້າງຕັ້ງສະມາຄົມ**

.......................................................................................................................................

...........................................................................................................................................

..........................................................................................................................................

## II. ຊື່ ແລະ ສັນຍາລັກ ຂອງສະມາຄົມ

1. ຊື່ສະມາຄົມ:..............................................................................................
2. ຊື່ຫຍໍ້ (ຖ້າມີ): ..........................................................................................
3. ຊື່ສະມາຄົມເປັນພາສາຕ່າງປະເທດ (ຖ້າມີ): ....................................................
4. ຊື່ຫຍໍ້ເປັນພາສາຕ່າງປະເທດ (ຖ້າມີ): ..........................................................
5. ສັນຍາລັກຂອງສະມາຄົມ (ຖ້າມີ): ...............................................................

## III. ໜ້າທີ່ຂອງສະມາຄົມ[3]

1. ...........................................................................................................
2. ...........................................................................................................
3. ...........................................................................................................

## IV. ຂອບເຂດການເຄື່ອນໄຫວ

ສະມາຄົມ……..........................……ແມ່ນການຈັດຕັ້ງສັງຄົມທີ່ມີສະມາຊິກໜຶ່ງ ຊຶ່ງເຄື່ອນໄຫວໃນຂອບເຂດ .....................................(ທົ່ວປະເທດ, ແຂວງ/ນະຄອນຫຼວງ, ເມືອງ/ເທດສະບານ/ນະຄອນ/ບ້ານ).

## V. ມາດຕະຖານ ແລະ ເງື່ອນໄຂຂອງສະມາຊິກສະມາຄົມ

1. ...........................................................................................................
2. ...........................................................................................................
3. ...........................................................................................................

## VI. ໂຄງປະກອບການຈັດຕັ້ງຂອງສະມາຄົມ

1. ...........................................................................................................
2. ...........................................................................................................
3. ...........................................................................................................

## VII. ການເງິນ ແລະ ຊັບສິນເບື້ອງຕົ້ນຂອງສະມາຄົມ[4]

1. ...........................................................................................................
2. ...........................................................................................................

---

[3] ຍົກໃຫ້ເຫັນໜ້າທີ່ຕົ້ນຕໍສະເພາະທີ່ສະມາຄົມຈະປະຕິບັດ ເພື່ອເຮັດຕາມຈຸດປະສົງ ແລະ ເປົ້າໝາຍຂອງສະມາຄົມ.

[4] ລະບຸຈຳນວນເງິນ ຫຼື ຊັບສິນເບື້ອງຕົ້ນທີ່ເປັນກຳມະສິດຂອງສະມາຄົມ ວ່າມີຈຳນວນເທົ່າໃດ ແລະ ມີຫຍັງແດ່.

ຂ້າພະເຈົ້າຂໍປະຕິຍານວ່າ ເມື່ອໄດ້ຮັບການອະນຸຍາດສ້າງຕັ້ງສະມາຄົມແລ້ວ ຈະປະຕິບັດບັນດາລະບຽບ ແລະ ກົດໝາຍຂອງລັດວາງອອກ ຢ່າງເຂັ້ມງວດ.

ທີ່................................, ວັນທີ..... ເດືອນ.......ປີ......

**ຕາງໜ້າຄະນະຂົນຂວາຍ**

**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

# ກົດລະບຽບ

## ຂອງສະມາຄົມ......................................

## ໝວດທີ I
## ບົດບັນຍັດທົ່ວໄປ

**ມາດຕາ 1 ຈຸດປະສົງຂອງກົດລະບຽບ**

ກົດລະບຽບສະບັບນີ້ກຳນົດຫຼັກການພື້ນຖານກ່ຽວກັບການຈັດຕັ້ງ, ການເຄື່ອນໄຫວ ແລະ ລະບອບແບບແຜນວິທີເຮັດວຽກຂອງສະມາຄົມ ເພື່ອເປັນບ່ອນອີງໃຫ້ແກ່ການເຄື່ອນໄຫວວຽກງານຂອງ ສະມາຄົມ ແນໃສ່ຮັບປະກັນການຈັດຕັ້ງປະຕິບັດພາລະບົດບາດ, ໜ້າທີ່ໃຫ້ມີຄວາມໂປ່ງໃສ, ເປັນລະບົບ ແລະ ປົກປ້ອງສິດຜົນປະໂຫຍດອັນຊອບທຳຂອງສະມາຄົມ, ສະມາຊິກສະມາຄົມ ແລະ ສັງຄົມ.

**ມາດຕາ 2 ຊື່ສະມາຄົມ:** ..........................................................................................

ຊື່ຫຍໍ້: ..........................................................................................................

ຊື່ເປັນພາສາອັງກິດ: ..........................................................................................

ຊື່ຫຍໍ້ເປັນພາສາອັງກິດ: ....................................................................................

**ມາດຕາ 3 ຕາປະທັບ ແລະ ສັນຍາລັກ**

3.1 **ຕາປະທັບ**

ສະມາຄົມ............................................... ມີຖານະເປັນນິຕິບຸກຄົນ, ມີຕາປະທັບເປັນຂອງຕົນເອງ ຊຶ່ງໄດ້ຮັບການອະນຸມັດ ແລະ ຮັບຮອງຈາກອົງການຈັດຕັ້ງລັດທີ່ກ່ຽວຂ້ອງ.

3.2 **ສັນຍາລັກ**

ສະມາຄົມ............................................... ມີສັນຍາລັກເປັນຂອງຕົນເອງ ຊຶ່ງໄດ້ຮັບການອະນຸມັດ ແລະ ຮັບຮອງຈາກອົງການຈັດຕັ້ງລັດທີ່ກ່ຽວຂ້ອງ.

**ມາດຕາ 4 ເປົ້າໝາຍ ແລະ ຈຸດປະສົງການເຄື່ອນໄຫວຂອງສະມາຄົມ**[1]

1. **ເປົ້າໝາຍ:**..........................................................................................
2. **ຈຸດປະສົງ:**......................

[1] ລະບຸຈຸດປະສົງຕົ້ນຕໍ ທີ່ເປັນສາເຫດໃນການສ້າງຕັ້ງ ແລະ ເປັນບ່ອນອີງໃນການເຄື່ອນໄຫວສະມາຄົມ.

3. ................................................................................................................................

**ມາດຕາ 5 ຂະແໜງການເຄື່ອນໄຫວ**[2]

1. ................................................................................................................................
2. ................................................................................................................................
3. ................................................................................................................................

**ມາດຕາ 6 ຂອບເຂດການເຄື່ອນໄຫວ (ທົ່ວປະເທດ, ແຂວງ/ນະຄອນຫຼວງ, ເມືອງ/ເທດສະບານ/ນະຄອນ/ບ້ານ)**[3]

ສະມາຄົມ.....................................................................................................................
ແມ່ນອົງການຈັດຕັ້ງສັງຄົມໜຶ່ງທີ່ມີສະມາຊິກ ແລະ ເຄື່ອນໄຫວໃນຂອບເຂດ...........................

## ໝວດທີ II
## ການຈັດຕັ້ງ ແລະ ການເຄື່ອນໄຫວວຽກງານຂອງສະມາຄົມ

**ມາດຕາ 7 ໂຄງປະກອບກົງຈັກຂອງສະມາຄົມ**

– ຫ້ອງການ;
– ໜ່ວຍງານ[4] (ຖ້າມີ).

**ມາດຕາ 8 ໂຄງປະກອບບຸກຄະລາກອນຂອງສະມາຄົມ**

– ຄະນະບໍລິຫານ (ປະທານ, ຮອງປະທານ ແລະ ຄະນະກຳມະການສະມາຄົມ);
– ຄະນະກວດກາ ຫຼື ຜູ້ກວດກາ;
– ຜູ້ອຳນວຍການ ຫຼື ຫົວໜ້າຫ້ອງການ (ຖ້າມີ);
– ສະມາຊິກ;
– ບຸກຄະລາກອນຕຳແໜ່ງອື່ນໆ (ຖ້າມີ).

**ມາດຕາ 9 ຄະນະບໍລິຫານສະມາຄົມ**

(ຕາມດຳລັດ ແລະ ຕາມຈຸດພິເສດຂອງສະມາຄົມ) ຄະນະບໍລິຫານມີຈຳນວນຢ່າງໜ້ອຍ: ..... ຄົນ ແລະ ຫຼາຍສຸດບໍ່ເກີນ...... ຄົນ. ຄະນະບໍລິຫານ ໄດ້ມາຈາກການເລືອກຕັ້ງໃນກອງປະຊຸມໃຫຍ່ຂອງສະມາຄົມ, ຄະນະບໍລິຫານ ຂອງສະມາຄົມ ມີອາຍຸການສະໄໝລະ........ປີ. ເມື່ອຄະນະບໍລິຫານຢູ່ໃນຕຳແໜ່ງຄົບຕາມກຳນົດແລ້ວ ແຕ່ຄະນະບໍລິຫານຊຸດໃໝ່ ຍັງບໍ່ທັນໄດ້ຮັບການຮັບຮອງຈາກທາງລັດຖະການ ກໍໃຫ້ຄະນະບໍລິຫານຊຸດເກົ່າຮັກສາການຊົ່ວຄາວໄປກ່ອນ.

❖ ສິດ ແລະ ໜ້າທີ່ຂອງຄະນະບໍລິຫານ (ກຳນົດຕາມດຳລັດ ແລະ ຕາມສະພາບຕົວຈິງຂອງສະມາຄົມ)
  – ຕຳແໜ່ງກຳມະການຄະນະບໍລິຫານ ສະມາຄົມ: ຖ້າຕຳແໜ່ງກຳມະການຄະນະບໍລິຫານ

---

[2] ຂະແໜງການເຄື່ອນໄຫວ ແມ່ນຍົກໃຫ້ເຫັນແຈ້ງກ່ຽວກັບວຽກທີ່ຕົນຈະເຄື່ອນໄຫວກ່ຽວຂ້ອງກັບຂະແໜງການໃດແດ່. ຍົກຕົວຢ່າງ: ເຄື່ອນໄຫວດ້ານຂະແໜງກະສິກຳ, ຂະແໜງສາທາລະນະສຸກ, ຂະແໜງອຸດສາຫະກຳ ແລະ ການຄ້າ, ຂະແໜງສຶກສາ ແລະ ອື່ນໆ.

[3] ລະບຸຂອບເຂດທີ່ສະມາຄົມ ຈະເຄື່ອນໄຫວໃສ່ ຕາມທີ່ໄດ້ສະເໜີຂໍອະນຸມັດສ້າງຕັ້ງ.

[4] ຍົກຕົວຢ່າງ: ໜ່ວຍງານສາຂາ, ໜ່ວຍງານສຶກສາ ແລະ ໜ່ວຍງານອື່ນໆ ທີ່ຂຶ້ນກັບສະມາຄົມ.

ສະມາຄົມວ່າງລົງກ່ອນຄົບກຳນົດຕາມວາລະຈະກຳນົດແນວໃດ ຂຶ້ນກັບສະມາຄົມກຳນົດເອງ ແຕ່ໂດຍທົ່ວໄປແລ້ວຈະກຳນົດຄື: ຄະນະບໍລິຫານ ແຕ່ງຕັ້ງສະມາຊິກສາມັນຄົນໃດຄົນໜຶ່ງ ທີ່ເຫັນສົມຄວນເຂົ້າຮັບຕຳແໜ່ງແທນຕຳແໜ່ງທີ່ວ່າງຢູ່ນັ້ນ ແຕ່ອາຍຸການຂອງຜູ້ຮັບຕຳແໜ່ງແທນຢູ່ໃນຕຳແໜ່ງໄດ້ ເທົ່າກັບອາຍຸການຂອງຜູ້ທີ່ຕົນແທນເທົ່ານັ້ນ.

– ກຳມະການຄະນະບໍລິຫານ ສະມາຄົມ ອາດຈະພົ້ນຈາກຕຳແໜ່ງດ້ວຍເຫດຜົນໃດແດ່ຂຶ້ນກັບສະມາຄົມກຳນົດ ແຕ່ປົກກະຕິແລ້ວ ແມ່ນຂຶ້ນກັບໜຶ່ງໃນກໍລະນີ ດັ່ງນີ້:

1. ເສຍຊີວິດ;
2. ລາອອກ; (ກຳມະການທີ່ມີຈຸດປະສົງຈະລາອອກຈາກເປັນກຳມະການ ແມ່ນ ຂຽນໃບລາອອກແລ້ວສົ່ງເຖິງຄະນະບໍລິຫານ ແລະ ໃຫ້ພົ້ນຈາກຕຳແໜ່ງ ເມື່ອຄະນະບໍລິຫານ ມີມະຕິໃຫ້ອອກ);
3. ພົ້ນຈາກການເປັນສະມາຊິກສະມາຄົມ;
4. ທີ່ປະຊຸມໃຫຍ່ລົງມະຕິໃຫ້ອອກຈາກຕຳແໜ່ງ, (ຂໍ້ກຳນົດລຸ່ມນີ້ແມ່ນອີງໃສ່ດຳລັດ ແລະ ອີງໃສ່ຄວາມເໝາະສົມຂອງແຕ່ລະສະມາຄົມເພື່ອກຳນົດ)

– ຄະນະບໍລິຫານສະມາຄົມ ຈະຕ້ອງປະຊຸມກັນຢ່າງໜ້ອຍເດືອນລະ......ຄັ້ງໂດຍຈັດຂຶ້ນພາຍໃນ ວັນທີ........ ຂອງທຸກໆເດືອນ ທັງນີ້ເພື່ອປຶກສາຫາລື ກ່ຽວກັບການບໍລິຫານວຽກງານຂອງສະມາຄົມ;

– ກອງປະຊຸມຄະນະບໍລິຫານສະມາຄົມ ຈະຕ້ອງມີສະມາຊິກເຂົ້າຮ່ວມປະຊຸມ ຫຼາຍກວ່າເຄິ່ງໜຶ່ງຂອງຈຳນວນສະມາຊິກຄະນະບໍລິຫານທັງໝົດ ຈຶ່ງຈະຖືວ່າຄົບອົງປະກອບ ຂອງກອງປະຊຸມ. ມະຕິຂອງກອງປະຊຸມຄະນະບໍລິຫານ ໃຫ້ຖືເອົາຕາມສຽງສ່ວນຫຼາຍເປັນຫຼັກ ແຕ່ຖ້າຄະແນນສຽງເທົ່າກັນກໍໃຫ້ປະທານກອງປະຊຸມເປັນຜູ້ຕັດສິນ;

– ໃນກອງປະຊຸມຄະນະບໍລິຫານ ຖ້າປະທານ ແລະ ຮອງປະທານສະມາຄົມບໍ່ຢູ່ ຫຼື ບໍ່ສາມາດປະຕິບັດໜ້າທີ່ໄດ້ ກໍໃຫ້ບັນດາສະມາຊິກຄະນະບໍລິຫານທີ່ເຂົ້າຮ່ວມກອງປະຊຸມນັ້ນເລືອກຕັ້ງກັນເອງ ເພື່ອໃຫ້ຄະນະບໍລິຫານຜູ້ໃດຜູ້ໜຶ່ງ ມາເຮັດໜ້າທີ່ເປັນປະທານກອງປະຊຸມຄັ້ງນັ້ນ.

**ມາດຕາ 10 ປະທານ ແລະ ຮອງປະທານສະມາຄົມ**

ປະທານ ແລະ ຮອງປະທານສະມາຄົມ ແມ່ນຄະນະບໍລິຫານສະມາຄົມ ທີ່ໄດ້ມາຈາກການເລືອກຕັ້ງໃນກອງປະຊຸມສ້າງຕັ້ງສະມາຄົມ ຫຼື ກອງປະຊຸມໃຫຍ່ສະມາຄົມ;

1. **ປະທານສະມາຄົມ** ຮັບຜິດຊອບຊີ້ນຳທຸກການຈັດຕັ້ງ ແລະ ການເຄື່ອນໄຫວວຽກງານຂອງສະມາຄົມ; ເປັນຕົວແທນຂອງສະມາຄົມໃນການຕິດຕໍ່ກັບບຸກຄົນພາຍນອກ ແລະ ເປັນປະທານ ໃນກອງປະຊຸມຄະນະບໍລິຫານ ແລະ ກອງປະຊຸມໃຫຍ່ຂອງສະມາຄົມ; ມີໜ້າທີ່ ແລະ ຂອບເຂດສິດຕົ້ນຕໍ ດັ່ງນີ້ (ໃຫ້ສະມາຄົມ ກຳນົດເອງ ຕາມຄວາມເໝາະສົມ ແລະ ເປັນທີ່ຍອມຮັບຂອງສະມາຊິກ):.......
2. **ຮອງປະທານສະມາຄົມ** ເປັນຜູ້ຊ່ວຍປະທານສະມາຄົມ ຮັບຜິດຊອບການຈັດຕັ້ງ ແລະ ການເຄື່ອນໄຫວວຽກງານຂອງສະມາຄົມ ແລະ ປະຕິບັດຕາມໜ້າທີ່ ທີ່ປະທານສະມາຄົມມອບໝາຍ ແລະ ເຮັດໜ້າທີ່ແທນປະທານສະມາຄົມ, ເມື່ອປະທານສະມາຄົມບໍ່ຢູ່ ຫຼື ບໍ່ສາມາດຈະປະຕິບັດໜ້າທີ່ໄດ້.

**ມາດຕາ 11 ຄະນະກວດກາ ຫຼື ຜູ້ກວດກາ**

ຄະນະກວດກາ ຫຼື ຜູ້ກວດກາ ໄດ້ມາຈາກການເລືອກຕັ້ງ ໃນກອງປະຊຸມໃຫຍ່ສະມາຄົມ, (ສະມາຄົມຈະເປັນຜູ້ກຳນົດລະອຽດສິດ ແລະ ໜ້າທີ່ຂອງຄະນະ ຫຼື ຜູ້ກວດກາສະມາຄົມ ແຕ່ໃນດຳລັດ ແລະ ໂດຍທົ່ວໄປ ແມ່ນມີສິດ ແລະ ໜ້າທີ່ຕົ້ນຕໍດັ່ງນີ້):

1. ດຳເນີນການກວດກາເປັນປົກກະຕິ ແລະ ກວດກາໃນກໍລະນີທີ່ມີປະກົດການ ລະເມີດກົດລະບຽບ ຫຼື ແບບແຜນວິທີການເຄື່ອນໄຫວຂອງສະມາຄົມ;
2. ກວດກາການຜັນຂະຫຍາຍ ແລະ ຈັດຕັ້ງປະຕິບັດມະຕິຂອງກອງປະຊຸມໃຫຍ່, ມະຕິກອງປະຊຸມຂອງຄະນະບໍລິຫານ, ມະຕິກອງປະຊຸມຂອງຄະນະປະຈຳສະມາຄົມ (ຖ້າມີ);
3. ກວດກາການຄຸ້ມຄອງບໍລິຫານພາຍໃນສະມາຄົມໃນດ້ານຕ່າງໆ, ການໃຊ້ຈ່າຍການເງິນຂອງສະມາຄົມ ເພື່ອຮັບປະກັນຄວາມເປັນລະບົບລະບຽບ ແລະ ໂປ່ງໃສຂອງສະມາຄົມ;
4. ພິຈາລະນາແກ້ໄຂ ຄຳຮ້ອງຟ້ອງ, ຄຳຮ້ອງທຸກ, ຄຳສະເໜີ ຂອງສະມາຊິກສະມາຄົມ ຕາມຂອບເຂດສິດຂອງຕົນ;
5. ປະຕິບັດສິດ ແລະ ໜ້າທີ່ອື່ນໆ ທີ່ສະມາຄົມເຫັນວ່າຈຳເປັນ.

**ມາດຕາ 12 ຜູ້ອຳນວຍການ ຫຼື ຫົວໜ້າຫ້ອງການຂອງສະມາຄົມ**

ຜູ້ອຳນວຍການ ຫຼື ຫົວໜ້າຫ້ອງການສະມາຄົມ ແມ່ນໄດ້ຮັບການແຕ່ງຕັ້ງ, ມີສິດ ແລະ ໜ້າທີ່ຄືແນວໃດ ແມ່ນຄະນະບໍລິຫານສະມາຄົມ ເປັນຜູ້ກຳນົດ ບົນພື້ນຖານດຳລັດວ່າດ້ວຍ ສະມາຄົມ 238/ລບ.

## ໝວດທີ III
## ສະມາຊິກສະມາຄົມ

**ມາດຕາ 13 ສະມາຊິກຂອງສະມາຄົມ**

ສະມາຊິກຂອງສະມາຄົມ ມີ ............ ປະເພດຄື:

- ສະມາຊິກສາມັນ (ຕາມມາດຕາ 38 ຂອງດຳລັດວ່າດ້ວຍ ສະມາຄົມ);
- ສະມາຊິກສະໜັບສະໜູນ (ຕາມມາດຕາ 39 ຂອງດຳລັດວ່າດ້ວຍ ສະມາຄົມ);
- ສະມາຊິກກິດຕິມະສັກ (ຕາມມາດຕາ 40 ຂອງດຳລັດວ່າດ້ວຍ ສະມາຄົມ);

(ແຕ່ລະສະມາຄົມ ກຳນົດເອງມີເທົ່າໃດປະເພດສະມາຊິກ ແລະ ມີສະມາຊິກປະເພດໃດແດ່, ບໍ່ຈຳເປັນຕ້ອງມີຄົບປະເພດສະມາຊິກເທິງນີ້);

- <u>ຕົວຢ່າງເງື່ອນໄຂຂອງສະມາຊິກ</u> (ຂຶ້ນກັບແຕ່ລະສະມາຄົມເປັນຜູ້ກຳນົດບົນພື້ນຖານລະບຽບກົດໝາຍ):

    1. ເປັນພົນລະເມືອງລາວມີອາຍຸແຕ່ 18 ປີ ຂຶ້ນໄປ;
    2. ເຫັນດີເຫັນພ້ອມກັບກົດລະບຽບຂອງສະມາຄົມ;

3. ເຂົ້າຮ່ວມທຸກການເຄື່ອນໄຫວຂອງສະມາຄົມ;

4. ແລະ ອື່ນໆ (ຂຶ້ນກັບສະມາຄົມ ກຳນົດເງື່ອນໄຂເອງຕື່ມ ຕາມຄວາມເໝາະສົມ).

– ຄ່າລົງທະບຽນ ແລະ ຄ່າບຳລຸງສະມາຄົມ (ຂຶ້ນກັບແຕ່ລະສະມາຄົມ ເປັນຜູ້ກຳນົດບົນພື້ນຖານລະບຽບກົດໝາຍ ຫຼື ອາດຈະບໍ່ກຳນົດຄ່າລົງທະບຽນ ແລະ ຄ່າບຳລຸງສະມາຄົມ): ......

– ການສະໝັກເຂົ້າເປັນສະມາຊິກ ຂອງສະມາຄົມ: ຜູ້ທີ່ມີຈຸດປະສົງຢາກເຂົ້າເປັນສະມາຊິກ ຂອງສະມາຄົມ ຕ້ອງຍື່ນໜັງສືຄຳຮ້ອງຂໍສະໝັກເປັນສະມາຊິກສະມາຄົມ (ຕາມແບບຟອມ 4) ຕໍ່ປະທານສະມາຄົມ ຫຼື ຜູ້ອຳນວຍການ ຫຼື ຫົວໜ້າຫ້ອງການສະມາຄົມ (ຂຶ້ນກັບຈຸດປະສົງຂອງຄະນະຂົນຂວາຍກຳນົດວ່າຜູ້ທີ່ຈະຮັບໜັງສືຄຳຮ້ອງ ແມ່ນໃຜ?)

<u>ຕົວຢ່າງ</u>: ຍື່ນໜັງສືຄຳຮ້ອງ (ຕາມແບບຟອມ 4) ຕໍ່ປະທານສະມາຄົມ ຫຼື ຜູ້ອຳນວຍການ ຫຼື ຫົວໜ້າຫ້ອງການສະມາຄົມ (ສຳລັບຂັ້ນຕອນການຮັບ ແລະ ການອະນຸມັດ ແມ່ນອີງຕາມແຕ່ລະສະມາຄົມ ກຳນົດ).

– ສະຖານະພາບຂອງສະມາຊິກກິດຕິມະສັກ (ຖ້າມີ): ໂດຍທົ່ວໄປ ສະມາຊິກກິດຕິມະສັກ ແມ່ນບຸກຄົນທີ່ຖືກເຊື້ອເຊີນຈາກ ສະມາຄົມ ໃຫ້ມາເປັນສະມາຊິກກິດຕິມະສັກ ເຊິ່ງສະຖານະພາບເປັນສະມາຊິກກິດຕິມະສັກສະມາຄົມ ແມ່ນໃຫ້ເລີ່ມນັບແຕ່ວັນທີ່ສະມາຄົມ ໄດ້ຮັບການຕອບຮັບຈາກບຸກຄົນດັ່ງກ່າວເປັນຕົ້ນໄປ.

– ສະຖານະພາບຂອງສະມາຊິກ: ສະຖານະພາບຂອງສະມາຊິກຈະສິ້ນສຸດລົງໃນກໍລະນີໃດ ຂຶ້ນຢູ່ກັບການກຳນົດຂອງສະມາຄົມ ແຕ່ໂດຍລວມແລ້ວມັກຈະສິ້ນສຸດລົງໃນກໍລະນີ ດັ່ງນີ້:

1. ເສຍຊີວິດ;
2. ລາອອກ (ໂດຍສົ່ງໜັງສືເປັນລາຍລັກອັກສອນຕໍ່ຜູ້ອຳນວຍການ, ຜູ້ອຳນວຍການຄົ້ນຄ້ວາແລ້ວສະເໜີ ຄະນະບໍລິຫານ ພິຈາລະນາອະນຸຍາດ. ສະມາຊິກລາອອກໄດ້ ເມື່ອໄດ້ຮັບອະນຸຍາດ ແລະ ເມື່ອໄດ້ຊຳລະໜີ້ສິນທີ່ຍັງເຫຼືອກັບສະມາຄົມເປັນທີ່ຮຽບຮ້ອຍແລ້ວ);
3. ປະພຶດຕົນບໍ່ເໝາະສົມ, ກອງປະຊຸມໃຫຍ່ຂອງສະມາຄົມ ຫຼື ຄະນະບໍລິຫານສະມາຄົມ ໄດ້ພິຈາລະນາລົງມະຕິ ໃຫ້ລຶບຊື່ອອກຈາກສະມາຄົມ ເພາະຜູ້ກ່ຽວໄດ້ປະພຶດຕົນບໍ່ເໝາະສົມຈົນນຳຄວາມເສື່ອມເສຍມາໃຫ້ແກ່ສະມາຄົມ;
4. ແລະ ອື່ນໆ ທີ່ສະມາຄົມເຫັນວ່າເໝາະສົມ.

**ມາດຕາ 14 ສິດ ແລະ ໜ້າທີ່ຂອງສະມາຊິກສະມາຄົມ**

(ສິດ ແລະ ໜ້າທີ່ ຂອງແຕ່ລະປະເພດສະມາຊິກສະມາຄົມ ຂຶ້ນກັບການກຳນົດຂອງແຕ່ລະສະມາຄົມ. ສຳລັບສະມາຊິກສາມັນສ່ວນໃຫຍ່ ມັກຈະມີສິດ ແລະ ໜ້າທີ່ຄືດັ່ງຕົວຢ່າງລຸ່ມນີ້)

<u>ຕົວຢ່າງ:</u>

1. ມີສິດເທົ່າທຽມກັນໃນການນຳໃຊ້ສະຖານທີ່ຂອງສະມາຄົມ;
2. ມີສິດສະເໜີຄວາມຄິດຄວາມເຫັນ ຕໍ່ຄະນະບໍລິຫານສະມາຄົມກ່ຽວກັບການເຄື່ອນໄຫວຂອງສະມາຄົມ;
3. ມີສິດໄດ້ຮັບສະຫວັດດີການຕ່າງໆ ທີ່ມີຢູ່ໃນສະມາຄົມ;
4. ມີສິດເຂົ້າຮ່ວມກອງປະຊຸມຂອງສະມາຄົມ;

5. ມີສິດໃນການເລືອກຕັ້ງ ຫຼື ສະໝັກຮັບເລືອກຕັ້ງ ຫຼື ແຕ່ງຕັ້ງ ເຂົ້າເປັນຄະນະນຳ ຫຼື ກຳມະການຂອງສະມາຄົມ ແລະ ມີສິດອອກສຽງລົງຄະແນນ ຕໍ່ບັນຫາ ແລະ ມະຕິຕ່າງໆ ໃນກອງປະຊຸມໄດ້ 01 ຄະແນນສຽງ;
6. ມີສິດຮ້ອງຂໍຕໍ່ຄະນະກວດກາ ເພື່ອກວດກາເອກະສານ ແລະ ບັນຊີຊັບສິນຂອງສະມາຄົມ;
7. ສະມາຊິກສາມັນຫລາຍກວ່າເຄິ່ງໜຶ່ງ ມີສິດສະເໜີຄະນະບໍລິຫານຈັດກອງປະຊຸມໃຫຍ່ວິສາມັນໄດ້;
8. ມີໜ້າທີ່ປະຕິບັດຕາມລະບຽບກົດໝາຍຂອງລັດ, ກົດລະບຽບ ແລະ ຂໍ້ບັງຄັບຕ່າງໆ ຂອງສະມາຄົມຢ່າງເຄັ່ງຄັດ;
9. ມີໜ້າທີ່ປະພຶດຕົນ ໃຫ້ສົມກັບກຽດທີ່ເປັນສະມາຊິກຂອງສະມາຄົມ;
10. ມີໜ້າທີ່ໃຫ້ຄວາມຮ່ວມມື ແລະ ສະໜັບສະໜູນການເຄື່ອນໄຫວວຽກງານຕ່າງໆ ຂອງສະມາຄົມ;
11. ມີໜ້າທີ່ຮ່ວມກິດຈະກຳທີ່ສະມາຄົມຈັດຂຶ້ນ;
12. ມີໜ້າທີ່ປະກອບສ່ວນເຜີຍແຜ່ຊື່ສຽງ ແລະ ກຽດສັກສີ ຂອງສະມາຄົມ ໃຫ້ເປັນທີ່ຮູ້ຈັກຢ່າງກວ້າງຂວາງໃນສັງຄົມ;
13. ແລະ ສິດ, ໜ້າທີ່ອື່ນໆ ບົນພື້ນຖານລະບຽບກົດໝາຍ.

## ໝວດທີ IV
## ກອງປະຊຸມໃຫຍ່

### ມາດຕາ 15 ກອງປະຊຸມໃຫຍ່ ຂອງສະມາຄົມ

ກອງປະຊຸມໃຫຍ່ຂອງສະມາຄົມ ແມ່ນອົງການນຳພາສູງສຸດຂອງສະມາຄົມ, ເປີດຂຶ້ນຕາມຮູບແບບກອງປະຊຸມໃຫຍ່ທົ່ວສະມາຊິກ ຫຼື ກອງປະຊຸມໃຫຍ່ຕົວແທນສະມາຊິກ (ຕາມສະມາຄົມ ເຫັນວ່າເໝາະສົມ, ສະມາຄົມ ກຳນົດເອງວ່າຈັກປີ ຈຶ່ງຈັດກອງປະຊຸມໃຫຍ່ສາມັນໜຶ່ງຄັ້ງແຕ່ຕ້ອງບໍ່ເກີນ 05 ປີ).

ກອງປະຊຸມຂອງສະມາຄົມປະກອບມີຄື:

**1.** ກອງປະຊຸມໃຫຍ່;

**2.** ກອງປະຊຸມປະຈຳປີ;

**3.** ກອງປະຊຸມຄະນະບໍລິຫານ.

ສະມາຄົມກຳນົດເອງໃນກົດລະບຽບຂອງຕົນກ່ຽວກັບລະບຽບການແຈ້ງຂ່າວກອງປະຊຸມໃຫຍ່ສະມາຄົມ ແຕ່ສ່ວນຫລາຍແມ່ນກຳນົດດັ່ງນີ້.

<u>ຕົວຢ່າງ:</u>

ຜູ້ອຳນວຍການ ເປັນຜູ້ແຈ້ງເປັນລາຍລັກອັກສອນ ໃຫ້ສະມາຊິກສະມາຄົມຊາບລ່ວງໜ້າກ່ອນ ຢ່າງໜ້ອຍ 30 ວັນ ກ່ອນໄຂກອງປະຊຸມໃຫຍ່. ການແຈ້ງ ອາດຈະດ້ວຍວິທີສົ່ງ

ແຈ້ງການ ໄປໃຫ້ສະມາຊິກທຸກຄົນ ຫຼື ແຈ້ງດ້ວຍການຕິດປະກາດຢູ່ບ່ອນເປີດເຜີຍໃນສໍານັກງານຂອງສະມາຄົມ.

ວາລະກອງປະຊຸມ ແມ່ນສະມາຄົມກໍານົດເອງແຕ່ໂດຍລວມແລ້ວ ຈະມີດັ່ງນີ້:
<u>ຕົວຢ່າງ:</u>

1. ຕາງໜ້າຄະນະບໍລິຫານ ລາຍງານບົດລາຍງານການເຄື່ອນໄຫວວຽກງານຂອງສະມາຄົມ ໃນໄລຍະຜ່ານມາ ແລະ ແຜນການເຄື່ອນໄຫວໃນຕໍ່ໜ້າ;
2. ລາຍງານສະພາບການເງິນ, ແຈ້ງບັນຊີລາຍຮັບ-ລາຍຈ່າຍ ແລະ ບັນຊີງົບປະມານຂອງປີທີ່ຜ່ານມາໃຫ້ສະມາຊິກຮັບຮູ້;
3. ຜ່ານຮ່າງກົດລະບຽບສະບັບປັບປຸງ ຕາມແບບຟອມ 6 (ຖ້າມີ);
4. ເລືອກຕັ້ງຄະນະບໍລິຫານ ແລະ ຄະນະກວດກາ ຫຼື ຜູ້ກວດກາ ຫຼື ຕໍາແໜ່ງສໍາຄັນອື່ນໆ;
5. ແລະ ຫົວຂໍ້ອື່ນໆ (ຖ້າມີ).

ລະບຽບການເຂົ້າຮ່ວມປະຊຸມ ໂດຍແມ່ນສະມາຄົມເປັນຜູ້ກໍານົດເອງ ແຕ່ສ່ວນຫຼາຍກໍານົດຄື:
<u>ຕົວຢ່າງ:</u>

ກອງປະຊຸມໃຫຍ່ ຫຼື ກອງປະຊຸມໃຫຍ່ວິສາມັນ ຕ້ອງມີສະມາຊິກສາມັນເຂົ້າຮ່ວມປະຊຸມຫຼາຍກວ່າເຄິ່ງໜຶ່ງ ຂອງຈໍານວນສະມາຊິກສາມັນທັງໝົດ ຈຶ່ງຈະຖືວ່າຄົບອົງປະກອບຂອງກອງປະຊຸມ ແຕ່ຖ້າເຖິງກໍານົດເວລາປະຊຸມແລ້ວ ສະມາຊິກສາມັນເຂົ້າຮ່ວມປະຊຸມຍັງບໍ່ຄົບຕາມເງື່ອນໄຂຂອງກອງປະຊຸມ, ໃຫ້ຄະນະບໍລິຫານຂອງສະມາຄົມໂຈະ ແລ້ວຮຽກປະຊຸມໃຫຍ່ອີກຄັ້ງໜຶ່ງ ໂດຍຈັດໃຫ້ມີກອງປະຊຸມໃຫຍ່ຂຶ້ນພາຍໃນ 15 ວັນ ນັບແຕ່ວັນທີ່ນັດປະຊຸມຄັ້ງທໍາອິດ. ສໍາລັບການປະຊຸມຄັ້ງໃໝ່ນີ້ ຖ້າມີສະມາຊິກສາມັນເຂົ້າຮ່ວມກອງປະຊຸມເທົ່າໃດ ກໍໃຫ້ຖືວ່າຄົບເງື່ອນໄຂຂອງກອງປະຊຸມ, ຍົກເວັ້ນຖ້າເປັນກອງປະຊຸມໃຫຍ່ວິສາມັນ ທີ່ເກີດຂຶ້ນຈາກການຮ້ອງຂໍຂອງສະມາຊິກ ແມ່ນບໍ່ຈໍາເປັນຕ້ອງຈັດກອງປະຊຸມໃຫຍ່ຂຶ້ນ ແລະ ໃຫ້ຖືວ່າກອງປະຊຸມເປັນອັນຍົກເລີກ. ການລົງມະຕິຕ່າງໆໃນກອງປະຊຸມໃຫຍ່ໃຫ້ຖືເອົາຄະແນນສຽງສ່ວນຫຼາຍເປັນຫຼັກ, ແຕ່ຖ້າລົງມະຕິຫາກມີຄະແນນສຽງເທົ່າກັນແມ່ນໃຫ້ປະທານກອງປະຊຸມ ເປັນຜູ້ຕັດສິນ. ໃນກອງປະຊຸມໃຫຍ່ ຖ້າປະທານ ແລະ ຮອງປະທານສະມາຄົມ ບໍ່ສາມາດມາຮ່ວມໄດ້ ຫຼື ບໍ່ສາມາດປະຕິບັດໜ້າທີ່ໄດ້ ແມ່ນໃຫ້ທີ່ປະຊຸມໃຫຍ່ເລືອກຕັ້ງເອົາກໍາມະການຄະນະບໍລິຫານສະມາຄົມຜູ້ໃດຜູ້ໜຶ່ງ ທີ່ມາຮ່ວມປະຊຸມເພື່ອໃຫ້ເຮັດໜ້າທີ່ເປັນປະທານກອງປະຊຸມຄັ້ງນັ້ນ.

## ໝວດທີ V
## ການເງິນ ແລະ ຊັບສິນ

**ມາດຕາ 16 ການເງິນ ແລະ ຊັບສິນຂອງສະມາຄົມ**

(ສະມາຄົມກໍານົດກ່ຽວກັບການເງິນ ແລະ ຊັບສິນຂອງສະມາຄົມ ແຕ່ຕ້ອງບົນພື້ນຖານກົດໝາຍ ແລະ ລະບຽບການຂອງລັດ):

ຕົວຢ່າງ:

- ການເງິນ ແລະ ຊັບສິນທັງໝົດ ແມ່ນກຳມະສິດຂອງສະມາຄົມ ເຊິ່ງຢູ່ໃນຄວາມຮັບຜິດຊອບຄຸ້ມຄອງຂອງຄະນະບໍລິຫານສະມາຄົມ. ເງິນສົດຂອງສະມາຄົມ ແມ່ນໃຫ້ນຳໄປຝາກໄວ້ຢູ່ໃນທະນາຄານ ................(ໃສ່ຊື່ທະນາຄານ) ສາຂາ.................(ໃສ່ຊື່ສາຂາທະນາຄານ);
- ການເຊັນຊື່ໃສ່ໃບບິນເງິນ ຫຼື ເຊັກເງິນ ຂອງສະມາຄົມ ....................;
- ປະທານສະມາຄົມ ມີສິດສັ່ງຈ່າຍເງິນຂອງສະມາຄົມຄັ້ງລະບໍ່ເກີນ............ກີບ. (ຖ້າເກີນກວ່ານັ້ນ, ຈະຕ້ອງໄດ້ຮັບອະນຸຍາດຈາກຄະນະບໍລິຫານ);
- ຄະນະບໍລິຫານ ອະນຸມັດໃຫ້ຈ່າຍເງິນໄດ້ຄັ້ງລະບໍ່ເກີນ.....................ກີບ. (ຖ້າຈຳເປັນຈະຕ້ອງໄດ້ຈ່າຍເກີນກວ່ານີ້ ຕ້ອງໄດ້ຮັບອະນຸຍາດຈາກ...........................);
- ນາຍບັນຊີມີສິດຮັກສາເງິນສົດໄດ້ບໍ່ເກີນ..........................ກີບ (ຖ້າເກີນກວ່າຈຳນວນນີ້ ຈະຕ້ອງນຳໄປຝາກທະນາຄານ ໃນບັນຊີຂອງສະມາຄົມພາຍໃນ....ວັນ);
- ນາຍບັນຊີ ຈະຕ້ອງເຮັດບັນຊີລາຍຮັບ-ລາຍຈ່າຍ ແລະ ບັນຊີງົບປະມານ ໃຫ້ຖືກຕ້ອງຕາມຫຼັກການວິຊາການ. ການຮັບ ຫຼື ຈ່າຍເງິນທຸກຄັ້ງ ........................;
- ຜູ້ກວດສອບບັນຊີ ...............................;
- ຜູ້ກວດສອບບັນຊີ ມີສິດ ແລະ ໜ້າທີ່.............................;
- ຄະນະບໍລິຫານ ຈະຕ້ອງໃຫ້ຄວາມຮ່ວມມືກັບຜູ້ກວດສອບບັນຊີ ເມື່ອໄດ້ຮັບການຮ້ອງຂໍ.

## ໝວດທີ VI
## ການປັບປຸງປ່ຽນແປງກົດລະບຽບ ແລະ ການແກ້ໄຂຊັບສິນ ພາຍຫຼັງການຍຸບເລີກສະມາຄົມ

### ມາດຕາ 17 ການປັບປຸງປ່ຽນແປງກົດລະບຽບ

ກົດລະບຽບຂອງສະມາຄົມສາມາດປັບປຸງ, ແກ້ໄຂ ແລະ ປ່ຽນແປງໄດ້ ໂດຍການຕົກລົງເຫັນດີຈາກຜູ້ເຂົ້າຮ່ວມກອງປະຊຸມໃຫຍ່ສະມາຄົມ ຕາມສຽງສ່ວນຫຼາຍ ແລະ ມີຜົນບັງຄັບໃຊ້ຫລັງຈາກກະຊວງ/ອົງການ................................ ຮັບຮອງເອົາຢ່າງເປັນທາງການ.

### ມາດຕາ 18 ການແກ້ໄຂຊັບສິນຂອງສະມາຄົມ ພາຍຫຼັງການຍຸບເລີກ

ຊັບສິນຂອງສະມາຄົມທີ່ເຫຼືອຢູ່ ພາຍຫຼັງຍຸບເລີກ ແລະ ໄດ້ຊຳລະສະສາງໜີ້ສິນເປັນທີ່ຮຽບຮ້ອຍແລ້ວແມ່ນໂອນໃຫ້ສະມາຄົມ, ມູນນິທິອື່ນທີ່ເຄື່ອນໄຫວຄ້າຍຄືກັນ ແຕ່ຖ້າບໍ່ມີສະມາຄົມ, ມູນນິທິທີ່ເຄື່ອນໄຫວຄ້າຍຄືກັນ ແມ່ນມອບໃຫ້ລັດເປັນຜູ້ຈັດສັນ.

## ໝວດທີ VII
## ບົດບັນຍັດສຸດທ້າຍ

### ມາດຕາ 19 ການຈັດຕັ້ງປະຕິບັດ

ຄະນະບໍລິຫານ (ປະທານ, ຮອງປະທານ ແລະ ກຳມະການ), ຄະນະກວດກາ, ຜູ້ອຳນວຍການ ແລະ ພະນັກງານຂອງສະມາຄົມ.............................. ຈົ່ງຮັບຮູ້ ແລະ ຈັດຕັ້ງປະຕິບັດກົດລະບຽບສະບັບນີ້ຢ່າງເຂັ້ມງວດ.

**ມາດຕາ 20 ຜົນສັກສິດຂອງກົດລະບຽບສະມາຄົມ**

ກົດລະບຽບສະບັບນີ້ ໄດ້ຮັບຮອງເອົາທີ່ກອງປະຊຸມໃຫຍ່ ເຊິ່ງຈັດຂຶ້ນໃນ ວັນທີ........... ແລະ ມີຜົນບັງຄັບໃຊ້ນັບແຕ່ວັນທີ ອົງການທີ່ມີສິດອະນຸມັດສ້າງຕັ້ງ ......................... ໄດ້ອອກຂໍ້ຕົກລົງຮັບຮອງເອົາເປັນຕົ້ນໄປ.

**ເຊັນປະທານສະມາຄົມ**

# ແຜນການເຄື່ອນໄຫວ ຫຼື ແຜນການດຳເນີນງານຂອງສະມາຄົມໃນຕໍ່ໜ້າ

ສະມາຄົມ........................................................ ໄດ້ຕົກລົງເຫັນດີວາງແຜນການເຄື່ອນໄຫວ ຫຼື ແຜນການດຳເນີນງານຂອງສະມາຄົມໃນປີ............... ດັ່ງນີ້:

## I. ຈຸດປະສົງ ແລະ ເປົ້າໝາຍ

1. ........................................................................................................................
2. ........................................................................................................................
3. ........................................................................................................................

## II. ເນື້ອໃນກິດຈະກຳ

1. ........................................................................................................................
2. ........................................................................................................................
3. ........................................................................................................................

## III. ຄາດຄະເນຜົນໄດ້ຮັບ

1. ........................................................................................................................
2. ........................................................................................................................
3. ........................................................................................................................

## IV. ຄາດຄະເນງົບປະມານ

ໃນການຈັດຕັ້ງປະຕິບັດບັນດາກິດຈະກຳທີ່ກ່າວມາຂ້າງເທິງນັ້ນ ສະມາຄົມ ຄາດຄະເນວ່າ ຈະຕ້ອງໄດ້ມີການນຳໃຊ້ງົບປະມານຈຳນວນ ................................ ກີບ ຫຼື .................................. ໂດລາ ແລະ ປັດໄຈນຳເຂົ້າອື່ນໆ (ຄົນ, ພາຫະນະ, ວັດຖຸ, ອຸປະກອນ ແລະ ອື່ນໆ) ດັ່ງນີ້:

1. ........................................................................................................................
2. ........................................................................................................................
3. ........................................................................................................................

ທີ່..................................., ວັນທີ..........ເດືອນ......ປີ...........

**ເຊັນປະທານ**

ແບບຟອມທີ 6: ໜັງສືຄຳຮ້ອງຂໍສະໝັກເຂົ້າເປັນສະມາຊິກສະມາຄົມ

**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**
**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

# ໜັງສືສະເໜີ

**ຮຽນ:** ຄະນະຂົນຂວາຍສ້າງຕັ້ງສະມາຄົມ ຫຼື ຄະນະບໍລິຫານສະມາຄົມ ທີ່ນັບຖື.

**ເລື່ອງ:** ຂໍສະໝັກເຂົ້າເປັນສະມາຊິກສະມາຄົມ...................................

- ອີງຕາມ ດຳລັດວ່າດ້ວຍ ສະມາຄົມ ສະບັບເລກທີ 238/ລບ, ລົງວັນທີ 11 ສິງຫາ 2017;
- ອີງຕາມ ຄຳແນະນຳການຈັດຕັ້ງປະຕິບັດ ດຳລັດວ່າດ້ວຍ ສະມາຄົມ ສະບັບ ເລກທີ 05/ພນ, ລົງວັນທີ 11 ຕຸລາ 2017;
- ອີງຕາມ ຂໍ້ຕົກລົງ ວ່າດ້ວຍການຮັບຮອງຄະນະຂົນຂວາຍສ້າງຕັ້ງສະມາຄົມ…………..... ສະບັບເລກທີ .............., ລົງວັນທີ........... ຫຼື ຂໍ້ຕົກລົງວ່າດ້ວຍ ການອະນຸມັດສ້າງຕັ້ງສະມາຄົມ …..... ສະບັບເລກທີ ..........., ລົງວັນທີ.........

ຂ້າພະເຈົ້າທ້າວ ຫຼື ນາງ: .............................. ນາມສະກຸນ:........................... ອາຍຸ...........ປີ, ອາຊີບປະຈຸບັນ:........................... ບ່ອນປະຈຳການ ຫຼື ທີ່ຢູ່:...................... ເບີໂທ: …........................... ແຟັກ:............... ທີ່ຢູ່ປະຈຸບັນເຮືອນເລກທີ:............. ໜ່ວຍ:........ ຮ່ອມ:............ ຖະໜົນ:.................... ບ້ານ:..................... ເມືອງ:........................ ແຂວງ:......................... ສຳມະໂນຄົວເລກທີ:............... ລົງວັນທີ:.................. ຫຼື ເລກບັດປະຈຳຕົວ:............ ເບີໂທສ່ວນຕົວ:....................... ແຟັກ:................ ຕູ້ໄປສະນີ:.................... ອີເມວ:.......................

ມີຈຸດປະສົງສະໝັກເຂົ້າເປັນສະມາຊິກສະມາຄົມ....................................... ເພາະວ່າ: ...................
..............................................................................................................................

ດັ່ງນັ້ນ, ຈຶ່ງຖືເປັນກຽດຮຽນສະເໜີມາຍັງ.................................................. ເພື່ອຂໍສະໝັກເຂົ້າເປັນສະມາຊິກສະມາຄົມ ແລະ ຂໍປະຕິຍານວ່າ ຈະປະຕິບັດຕາມກົດໝາຍ, ລະບຽບການຂອງລັດ ແລະ ກົດລະບຽບຂອງສະມາຄົມ ຢ່າງເຂັ້ມງວດ.

ທີ່..............................., ວັນທີ..... ເດືອນ.......ປີ......

**ຜູ້ຮ້ອງຂໍ**

**ເອກະສານຄັດຕິດ:**

- ສຳເນົາບັດປະຈຳຕົວ ຫຼື ສຳມະໂນຄົວ.

<u>ບັນຊີລາຍຊື່ຜູ້ສະໝັກເຂົ້າເປັນສະມາຊິກສະມາຄົມ...................................... (ສາມັນ ຫຼື ສະໜັບສະໜູນ ຫຼື ກິດຕິມະສັກ)</u>

| ລ/ດ | ຊື່ ແລະ ນາມສະກຸນ | ວັນ, ເດືອນ, ປີເກີດ | ອາຊີບ | ບ່ອນປະຈໍາການ ຫຼື ທີ່ຢູ່ | ເລກທີສໍາມະໂນຄົວ ຫຼື ເລກບັດປະຈໍາຕົວ | ເບີໂທລະສັບ |
|---|---|---|---|---|---|---|
| | | | | | | |
| | | | | | | |
| | | | | | | |
| | | | | | | |
| | | | | | | |
| | | | | | | |
| | | | | | | |
| | | | | | | |
| | | | | | | |
| | | | | | | |
| | | | | | | |

แบบฟอมທີ 8: ບົດບັນທຶກຜົນກອງປະຊຸມສ້າງຕັ້ງສະມາຄົມ

**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**
**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

## ບົດບັນທຶກຜົນກອງປະຊຸມສ້າງຕັ້ງສະມາຄົມ

ຄະນະຂັບເຄື່ອນສ້າງຕັ້ງສະມາຄົມ ..................... ໄດ້ຈັດກອງປະຊຸມຂຶ້ນໃນວັນທີ...................... ຢູ່ທີ່......................... ກອງປະຊຸມຄັ້ງນີ້ມີສະມາຊິກສາມັນ ເຂົ້າຮ່ວມທັງໝົດ........ຄົນ, ຍິງ.......ຄົນ. ສະມາຊິກສະໜັບສະໜູນເຂົ້າຮ່ວມ.......ຄົນ, ຍິງ.......ຄົນ ແລະ ສະມາຊິກກິດຕິມະສັກເຂົ້າຮ່ວມ ........ຄົນ, ຍິງ.......ຄົນ. ນອກນັ້ນ, ກອງປະຊຸມຍັງໄດ້ ເຊື້ອເຊີນ ທ່ານ....................................... ແລະ ພາກສ່ວນອື່ນໆ ເຂົ້າຮ່ວມນໍາ (ຖ້າມີ ໃຫ້ຂຽນຊື່, ນາມສະກຸນ ແລະ ຕໍາແໜ່ງ).

❖ **ກອງປະຊຸມ ໄດ້ຜ່ານເນື້ອໃນຕ່າງໆ ດັ່ງນີ້:**

1. ອ່ານຂໍ້ຕົກລົງວ່າດ້ວຍການອະນຸມັດໃຫ້ເປີດກອງປະຊຸມສ້າງຕັ້ງສະມາຄົມ/ກອງປະຊຸມໃຫຍ່ຂອງສະມາຄົມ;
2. ຟັງການລາຍງານ ຂອງຄະນະຂັບເຄື່ອນສ້າງຕັ້ງສະມາຄົມ/ຄະນະບໍລິຫານສະມາຄົມ (ກໍລະນີເປັນກອງປະຊຸມໃຫຍ່ຂອງສະມາຄົມ) ກ່ຽວກັບຂະບວນການກະກຽມສ້າງຕັ້ງສະມາຄົມຜ່ານມາ;
3. ຜ່ານຮ່າງກົດລະບຽບຂອງສະມາຄົມ;
4. ເລືອກຕັ້ງຄະນະບໍລິຫານ, ຄະນະກວດກາ ຫຼື ຜູ້ກວດກາ ແລະ ຕໍາແໜ່ງສໍາຄັນອື່ນໆ (ຖ້າມີ);
5. ຜ່ານທິດທາງ, ແຜນການເຄື່ອນໄຫວ ຫຼື ແຜນດໍາເນີນງານ ຂອງສະມາຄົມໃນຕໍ່ໜ້າ;
6. ຜ່ານມະຕິກອງປະຊຸມສ້າງຕັ້ງສະມາຄົມ/ກອງປະຊຸມໃຫຍ່ຂອງສະມາຄົມ;
7. ວຽກງານອື່ນໆ (ຖ້າມີ).

❖ **ຜົນຜ່ານກອງປະຊຸມ ໄດ້ຕົກລົງບັນຫາດັ່ງນີ້:**

❖ **ການຜ່ານຮ່າງກົດລະບຽບ ແລະ ການເລືອກຕັ້ງຕໍາແໜ່ງຕ່າງໆຂອງສະມາຄົມ**

ກອງປະຊຸມໃຫຍ່ສ້າງຕັ້ງ ຫຼື ກອງປະຊຸມໃຫຍ່ສະມາຄົມ..............ໄດ້ຜ່ານຮ່າງກົດລະບຽບ ແລະ ເລືອກຕັ້ງຄະນະບໍລິຫານ, ຄະນະກວດກາ ແລະ ຜູ້ອໍານວຍການ ຫຼື ຫົວໜ້າຫ້ອງການສະມາຄົມ (ຖ້າມີ) ດັ່ງນີ້:

**1.** ຜ່ານຮ່າງກົດລະບຽບ

ກອງປະຊຸມ ໄດ້ຄົ້ນຄວ້າ ແລະ ເຫັນດີເປັນເອກະພາບຕໍ່ຮ່າງກົດລະບຽບ ມີທັງໝົດ.....ໝວດ ແລະ .... ມາດຕາ

**2.** ຜ່ານການເລືອກຕັ້ງຄະນະບໍລິຫານ ແລະ ຄະນະກວດກາສະມາຄົມ

ກອງປະຊຸມ ໄດ້ເຫັນດີເລືອກຕັ້ງຄະນະບໍລິຫານ ເຊິ່ງປະກອບມີ:

1) ທ່ານ ..........................................................................................................;

2) ທ່ານ ..........................................................................................................;

3) ທ່ານ ..........................................................................................................

(ກໍລະນີຈໍານວນຫຼາຍ ແມ່ນພິມເພີ່ມຕື່ມ ຫຼື ເຮັດເປັນບັນຊີຊ້ອນທ້າຍ)

❖ ຖ້າໃຊ້ຮູບແບບປ່ອນບັດ

ໃຫ້ລະບຸຈຳນວນບັດທັງໝົດ: .............ບັດ. ໃນນີ້ມີບັດເສຍ (ບັດຕາຍ): ........ບັດ.

❖ ຖ້າໃຊ້ຮູບແບບຍົກມືເຫັນດີ

ໃຫ້ລະບຸຈຳນວນຜູ້ຍົກມືເຫັນດີທັງໝົດ:........ ຄົນ. ໃນນີ້ບໍ່ຍົກມື: ........ ຄົນ.

❖ ຜູ້ທີ່ໄດ້ຮັບການເລືອກຕັ້ງເຂົ້າໃນຄະນະກວດກາສະມາຄົມມີຄື:

1) ທ່ານ ...........................................................................................................;

2) ທ່ານ ...........................................................................................................;

3) ທ່ານ ...........................................................................................................

(ກໍລະນີຈຳນວນຫຼາຍ ແມ່ນເຮັດບັນຊີຊ້ອນທ້າຍ)

❖ ຖ້າໃຊ້ຮູບແບບປ່ອນບັດ

ໃຫ້ລະບຸຈຳນວນບັດທັງໝົດ: .............ບັດ. ໃນນີ້ມີບັດເສຍ (ບັດຕາຍ): ........ບັດ.

❖ ຖ້າໃຊ້ຮູບແບບຍົກມືເຫັນດີ

ໃຫ້ລະບຸຈຳນວນຜູ້ຍົກມືເຫັນດີທັງໝົດ:........ ຄົນ. ໃນນີ້ບໍ່ຍົກມື: ........ ຄົນ.

**3.** ຜົນການເລືອກຕັ້ງຜູ້ອຳນວຍການ ຫຼື ຫົວໜ້າຫ້ອງການ ແລະ ຕຳແໜ່ງສຳຄັນອື່ນໆຂອງສະມາຄົມ ມີດັ່ງນີ້:

1) ທ່ານ ...........................................................................................................;

2) ທ່ານ ...........................................................................................................;

3) ທ່ານ ...........................................................................................................

(ກໍລະນີຈຳນວນຫຼາຍ ແມ່ນເຮັດບັນຊີຊ້ອນທ້າຍ)

❖ ຖ້າໃຊ້ຮູບແບບປ່ອນບັດ

